ສິດໃນການລາປ່ວຍທີ່ໄດ້ຮັບຄ່າຈ້າງ
ແຈ້ງການກ່ຽວກັບສິດທິຂອງພະນັກງານ

ເລີ່ມແຕ່ວັນທີ 1 ເດືອນ ກໍລະກົດ ປີ 2015, ພະນັກງານຂອງລັດ Massachusetts ມີສິດໃນການໄດ້ຮັບ ແລະ ໃຊ້ວັນພັກລາປ່ວຍຈາກການເຮັດວຽກ.

ຜູ້ທີ່ມີຄຸນສົມບັດ?

ພະນັກງານທຸກຄົນ ໃນລັດ Massachusetts
ສາມາດໄດ້ຮັບເວລາພັກເຈັບປ່ວຍ.
ນີ້ລວມທັງ ເຮັດວຽກເຕັມຊົວໂມງ, ເຮັດວຽກພິເສດ,
ຊົ່ວຄາວ, ແລະ ພະນັກງານຕາມລະດຸການ.

ຈະໄດ້ຮັບການຈ່າຍເງິນບໍ?

- ຖ້ານາຍຈ້າງມີພະນັກງານ 11 ຄົນ ຫຼື ຫຼາຍກວ່າ, ເວລາທີ່ປ່ວຍຈະຕ້ອງຈ່າຍ.
- ສໍາລັບນາຍຈ້າງທີ່ມີພະນັກງານ 10 ຄົນ ຫຼື ໜ້ອຍກວ່າ, ເວລາທີ່ປ່ວຍອາດຈະບໍ່ໄດ້ຈ່າຍ.
- ການຈ່າຍເງິນໃນຊ່ວງເວລາປ່ວຍ ຈະຕ້ອງຈ່າຍຕາມກໍານົດ ແລະ ອັດຕາປີກກະຕິຂອງຄ່າແຮງງານ.

ຈະໄດ້ຮັບສິດແນວໃດ?

- ພະນັກງານຈະໄດ້ຮັບ 1 ຊົ່ວໂມງຂອງການລາປ່ວຍທຸກ 30 ຊົວໂມງຂອງການເຮັດວຽກຂອງພວກເຂົາ.
- ພະນັກງານສາມາດໄດ້ຮັບ ແລະ ໃຊ້ງານລາປ່ວຍໄດ້ເຖິງ 40 ຊົ່ວ ໂມງຕໍ່ປີ ຖ້າຊົ່ວໂມງເຮັດວຽກຂອງພວກເຂົາພຽງພໍ.
- ພະນັກງານ ທີ່ບໍ່ໄດ້ໃຊ້ສິດໃນການລາປ່ວຍນັ້ນ ໃນທ້າຍປີ ສາມາດ ຮັກສາສິດສູງ ເຖິງ 40 ຊົ່ວໂມງ.
- ພະນັກງານເລີ່ມໄດ້ຮັບສິດໃນການລາປ່ວຍ ໃນວັນທໍາອິດຂອງການເຮັດວຽກຂອງພວກເຮົາ ແລະ ນໍາໃຊ້ສິດໃນການລາປ່ວຍໄດ້ ຫຼັງຈາກ 90 ວັນ ຂອງວັນເລີ່ມຕົ້ນເຮັດວຽກ.

ເມື່ອໃດທີ່ສາມາດໃຊ້ການລາປ່ວຍໄດ້?

- ພະນັກງານສາມາດນໍາໃຊ້ພັກລາປ່ວຍໄດ້ ເມື່ອພະນັກງານ ຫຼື ລູກຂອງພະນັກງານ, ຄູ່ຜົວເມຍ, ພໍ່ແມ່, ພໍ່ແມ່ຂອງຜົວ ຫຼື ເມຍ ປ່ວຍ, ມີການນັດໝາຍທາງການແພດ, ຫຼື ມີຜົນກະທົບ ເຖິງທີ່ຢູ່ທີ່ຮຸ່ນແຮງ ໃນຄອບຄົວ.
- ຈໍານວນນ້ອຍທີ່ສຸດຂອງ ການລາປ່ວຍ ພະນັກງານສາມາດໃຊ້ໜຶ່ງ ຊົວໂມງ.
- ການລາປ່ວຍບໍ່ສາມາດເປັນຂໍອ້າງໃນການໄປເຮັດວຽກຊ້າ ໂດຍທີ່ບໍ່ມີ ການແຈ້ງລ່ວງໜ້າທີ່ເໝາະສົມໃຊ້.
- ການນໍາໃຊ້ລາປ່ວຍ ສໍາລັບຈຸດປະສົງອື່ນ ແມ່ນບໍ່ອະນຸຍາດ ແລະ ອາດສົ່ງຜົນ ໃຫ້ການເຮັດວຽກຂອງພະນັກງານ ທີ່ຈະຖືກປະຕິບັດລະບຽບວິໄນ.

ນາຍຈ້າງສາມາດມີນະໂຍບາຍທີ່ແຕກຕ່າງກັນໄດ້ບໍ?

ແມ່ນແລ້ວ. ນາຍຈ້າງອາດມີນະໂຍບາຍກ່ຽວກັບລາປ່ວຍ ຫຼື ຈ່າຍເງິນນອກເວລາ ດ້ວຍຕົວຂອງພວກເຂົາເອງ, ຍາວນານທີ່ພະນັກງານສາມາດນໍາໃຊ້ເວລາຢ່າງນ້ອຍຈໍານວນດຽວກັນຂອງເວລາ, ສໍາລັບເຫດຜົນດຽວກັນ, ແລະ ມີການປ້ອງກັນວຽກດຽວກັນ ພາຍໃຕ້ກົດໝາຍວ່າດ້ວຍສິດໃນການພັກ ລາປ່ວຍ.

ການແກ້ແຄ້ນ

- ພະນັກງານທີ່ໃຊ້ສິດລາພັກປ່ວຍແມ່ນ ຈະບໍ່ຖືກໄລ່ອອກ ຫຼື ຖືກແກ້ແຄ້ນ ເນື່ອງຈາກການໃຊ້ສິດ ຫຼື ຄວາມພະຍາຍາມໃນການໃຊ້ສິດພາຍໃຕ້ກົດໝາຍ.
- ຕົວຢ່າງຂອງການແກ້ແຄ້ນປະກອບມີ: ການປະຕິເສດການນໍາໃຊ້ ຫຼືການລ່າຊ້າໃນການຈ່າຍເງິນສໍາລັບເວລາເຈັບປ່ວຍທີ່ໄດ້ຮັບຄ່າຈ້າງ, ການໄລ່ພະນັກງານອອກ, ຕັດຊົ່ວໂມງເຮັດວຽກລົງ, ຫຼື ການມອບຫມາຍວຽກທີ່ພະນັກງານທີ່ບໍ່ເພິ່ງປະສົງ.

ແຈ້ງການ ແລະ ການກວດຮັບຮອງ

- ພະນັກງານຕ້ອງແຈ້ງນາຍຈ້າງຂອງພວກເຂົາກ່ອນທີ່ພວກເຂົາຈະໃຊ້ພັກລາປ່ວຍ ຍົກເວັ້ນໃນກໍລະນີສຸກເສີນ.
- ນາຍຈ້າງອາດຮຽກຮ້ອງໃຫ້ພະນັກງານນໍາໃຊ້ ລະບົບການແຈ້ງທີ່ ສົມເຫດສົມຜົນ ຕາມນາຍຈ້າງສ້າງຂຶ້ນ.
- ພະນັກງານທີ່ຂາດວຽກເປັນເວລາ 3 ວັນຕິດຕໍ່ກັນ ຫຼື ນໍາໃຊ້ລາປ່ວຍ ພາຍໃນ 2 ອາທິດ ກ່ອນການອອກວຽກຂອງພວກເຂົາ, ບາງເທື່ອນາຍຈ້າງຂອງພວກເຂົາ ອາດຮຽກຮ້ອງໃຫ້ມີເອກະສານຢັ້ງຢືນ ຈາກຜູ້ບໍລິການທາງການແພດ.

ທ່ານມີຄໍາຖາມບໍ?

ໂທ ພະແນກຍຸດຕິທໍາແຮງງານ ທີ່ (617) 727 3465 ເຂົ້າເບິ່ງເວັບໄຊທ້ www.mass.gov/ago/earnedsicktime

ສົ່ງອີເມວ ຫາພວກເຮົາທີ່ EarnedSickTime@state.ma.us

Commonwealth of Massachusetts
Office of the Attorney General
Lao - July 2015

ໄອຍະການສຸງສຸດບັງຄັບໃຊ້ກົດໝາຍ ແລະ ລະບຽບການ ວ່າດ້ວຍສິດໃນການລາປ່ວຍ.
ມັນເປັນສິ່ງທີ່ຜິດກົດໝາຍທີ່ລະເມີດບົດບັນຍັດຂອງກົດໝາຍວ່າດ້ວຍ ສິດໃນການລາປ່ວຍ
ລະເມີດບົດບັນຍັດຂອງກົດໝາຍວ່າດ້ວຍ ສິດໃນການລາປ່ວຍ, M.G.L. c. 149, § 148C, ຫຼື ລະບຽບການເຫຼົ່ານີ້, 960 CMR 33.00, ຈະຢູ່ພາຍໃຕ້ມາດຕາ (1), (2), (4), (6) ແລະ (7) ຂອງໜວດຍ່ອຍ (b) of M.G.L. c. 149, § 27C(b) ແລະ § 150.
ແຈ້ງການສະບັບນີ້ແມ່ນມີຈຸດປະສົງເພື່ອແຈ້ງ.
ຂໍ້ຄວາມເຕັມຮູບແບບຂອງກົດໝາຍ ແລະ ລະບຽບການແມ່ນມີຢູ່ທີ່ www.mass.gov/ago/earnedsicktime.